# ຄູ່ມືການຕິດຕັ້ງ ແລະ ນຳໃຊ້

# ລະບົບ ບໍລິການພາກລັດປະຕູດຽວ Gov-X

# ສຳຫຼັບ ລະບົບປະຕິບັດການ Android ແລະ iOS

สาละบาน


1. ແອັບພິເຄຊັນ Gov-X ........ 2

2. ຂັ້ນຕອນການດາວໂຫຼດ ແລະ ຕິດຕັ້ງ ລະບົບ Gov-X........ 3

3. ວິທີແນະນຳການເຂົ້າໃຊ້ລະບົບ Gov-X ເບື້ອງຕົ້ນ ........ 4

4. ການນຳໃຊ້ລະບົບ Gov-X ........ 5

4.1 ໜ້າຫຼັກ (Home) ........ 5

4.1.1. ລະບົບກວດສອບຂໍ້ມູນບັດປະກັນສັງຄົມ (LSSO)........ 6

4.1.2. ລະບົບລວມສູນແບບຟອມ ແລະ ເອກະສານທາງການ ( G-Form)........ 6

4.1.3. ລະບົບຂໍ້ມູນວິສາຫະກິດແຫ່ງຊາດ (NED) ........ 6

4.1.4. ລະບົບຄັງປັນຍາລາວ ........ 6

4.2 ການແຈ້ງເຕືອນ........ 7

4.3 ການຕັ້ງຄ່າ ........ 7

## 1. ແອັບພິເຄຊັນ Gov-X

ລະບົບບໍລິການຂອງພາກລັດປະຕູດຽວ (Gov-X) ແມ່ນເພື່ອສ້າງເງື່ອນໄຂໃຫ້ ປະຊາຊົນ, ທຸລະກິດ ແລະ ພະນັກງານທີ່ເຮັດການບໍລິການສາທາລະນະ ໃນການເຂົ້າຫາຂໍ້ມູນການບໍລິການຂອງພາກລັດຜ່ານປະຕູດຽວ ເທິງ ເຄື່ອງໂທລະສັບມືຖືສະມາດໂຟນ.

- **ລະບົບລົງທະບຽນເລກໝາຍໂທລະສັບດ້ວຍຕົນເອງ (3 ແກຣັບ)**, ແມ່ນແອັບທີ່ໃຫ້ປະຊາຊົນ ສາມາດລົງທະ ບຽນ ເລກໝາຍໂທລະສັບດ້ວຍຕົນເອງໄດ້ຜ່ານລະບົບອອນລາຍ ຕະຫຼອດ 24 ຊົ່ວໂມງ.
- **ລະບົບກວດສອບຂໍ້ມູນບັດປະກັນສັງຄົມ (LSSO)** ເຊິ່ງຜູ້ນໍາໃຊ້ບໍລິການສາມາດເຂົ້າໄປກວດສອບຂໍ້ມູນບັດ ປະກັນສັງຄົມຂອງຕົນໂດຍການປ້ອນລະຫັດບັດເຂົ້າແລ້ວ ລະບົບຈະສະແດງຂໍ້ມູນພື້ນຖານປະກັນສັງຄົມເຊັ່ນ: ຊື່ໂຮງໝໍ ແລະ ຂໍ້ມູນປະກັນສັງຄົມຂອງຄອບຄົວ.
- **ລະບົບຄັງປັນຍາລາວ** ເປັນລະບົບສື່ການສອນແບບອອນລາຍ, ຜູ້ໃຊ້ສາມາດເຂົ້າໄປຮຽນວິຊາຕ່າງໆຕັ້ງແຕ່ ລະດັບ ປໍ1 ໄປຈົນຮອດ ມໍ7 ແລະ ມີຫຼັກສູດສໍາລັບການເພີ່ມທັກສະໃນການສອນໃຫ້ກັບອາຈານ ໂດຍບໍ່ເສຍ ຄ່າ.
- **ລະບົບລວມສູນແບບຟອມ ແລະ ເອກະສານທາງການ** ເພື່ອໃຫ້ປະຊາຊົນ ສາມາດ download ແລ້ວປະກອບ ເອກະສານ ຕ່າງໆ ໄດ້ຢ່າງວ່ອງໄວ ໂດຍບໍ່ຈໍາເປັນເດີນທາງໄປປ່ອງບໍລິການ.
- **ລະບົບຂໍ້ມູນວິສາຫະກິດແຫ່ງຊາດ (NED)** ເພື່ອກວດສອບທະບຽນວິສາຫະກິດຂອງບັນດາບໍລິສັດວິສາຫະ ກິດ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ ວ່າໄດ້ຈົດທະບຽນວິສາຫະກິດແລ້ວຫຼືບໍ່.

**ລະບົບໃບຂັບຂີ່ດິຈິຕອນ (e-Driving License)** ເພື່ອລົງທະບຽນໃບຂັບຂີ່ໃຫ້ເປັນຮູບແບບດິຈິຕອນ, ປະຈຸ ບັນ ແມ່ນກໍາລັງດໍາເນີນການປະສານສົມທົບກັບກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ໃນການເຊື່ອມຕໍ່ຂໍ້ ມູນກັບລະບົບຖານຂໍ້ມູນໃບຂັບຂີ່.

ກ່ອນຈະຕິດຕັ້ງລະບົບ ຈະຕ້ອງໄດ້ກວດສອບອຸປະກອນຂອງທ່ານກ່ອນ ວ່າມີຄວາມພ້ອມໃນການຮອງຮັບການ ເຮັດວຽກຂອງແອັບພິເຄຊັນ ຫຼື ບໍ່ ດັ່ງນີ້:

| | | |
|---|---|---|
| **ຮອງຮັບລະບົບປະຕິບັດການໃນໂທລະສັບມືຖື (Smart Phone)** | | |
| **ເວີຊັນ (Version)** | ***7.0 ຂຶ້ນໄປ*** | ***10.0 ຂຶ້ນໄປ*** |
| **ສາມາດດາວໂຫຼດແອັບພິເຄຊັນໄດ້ຈາກ** | | |

ຖ້າຫາກວ່າອຸປະກອນທີ່ ທ່ານຈະຕິດຕັ້ງມີສະເປັກທີ່ຕໍ່າກວ່າຂໍ້ມູນທີ່ລະບຸໄວ້ ອາດຈະເຮັດໃຫ້ແອັບພິເຄຊັນບໍ່ສາ ມາດເຮັດວຽກໄດ້ປົກກະຕິ ຫຼື ອາດຈະຕິດຕັ້ງບໍ່ໄດ້.

## 2. ຂັ້ນຕອນການດາວໂຫຼດ ແລະ ຕິດຕັ້ງ ລະບົບ Gov-X.

ເຂົ້າໄປທີ່ Store ແລ້ວພິມຄຳວ່າ GovX ເພື່ອດາວໂຫຼດ ແລ້ວກົດເລືອກຕາມລະບົບມືຖືຂອງທ່ານ.









# 3. ວິທີແນະນຳການເຂົ້າໃຊ້ລະບົບ Gov-X ເບື້ອງຕົ້ນ










1. ກົດເຂົ້າປຸ່ມ ເຂົ້າສູ່ລີບົບລະບົບດ້ວຍເບີໂທລະສັບ (Login) ເພື່ອດຳເນີນການໃນຂັ້ນຕໍ່ໄປ
2. ກົດຍອມຮັບເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆ
3. ປ້ອນເບີໂທລະສັບຂອງທ່ານ ແລ້ວ ກົດປຸ່ມ “ຂໍລະຫັດຜ່ານ OTP” ແລະ ປ້ອນລະຫັດ 06 ຕົວເລກ ທີ່ໄດ້ຮັບຈາກຂໍ້ຄວາມແຈ້ງເຕືອນ ຫຼັງຈາກນັ້ນ ກົດປຸ່ມ ຢືນຢັນ







4. ຖ້າເບີຂອງທ່ານຍັງບໍ່ທັນໄດ້ລົງທະບຽນເລກໝາຍໂທລະສັບ ແນະນຳໃຫ້ທ່ານກົດໄປທີ່ປຸ່ມ "ຂຶ້ນທະບຽນເບີໂທ" ຕາມຂັ້ນຕອນທີ່ລະບົບໄດ້ກຳນົດໄວ້
5. ຂັ້ນຕອນການລົງທະບຽນໝາຍເລກໂທລະສັບໃໝ່ແມ່ນຢູ່ ເບິ່ງຂັ້ນຕອນການຕິດຕັ້ງຕາມຄູ່ມືລຸ່ມນີ້: " ຄູ່ມືການນຳໃຊ້ - 3 ແກັບ (simreg.gov.la) " ).

## 4. ການນຳໃຊ້ລະບົບ Gov-X




ລະບົບບໍລິການຂອງພາກລັດປະຕູດຽວ (Gov-X) ປະກອບມີ: ໜ້າຫຼັກ, ການແຈ້ງເຕືອນ ແລະ ຕັ້ງຄ່າ

### 4.1 ໜ້າຫຼັກ (Home)

ຜູ້ໃຊ້ງານສາມາດເບິ່ງຂໍ້ມູນຕ່າງໆໄດ້ເຊັ່ນ: ຂໍ້ມູນບັດຕ່າງໆ, ໂປຣຟາຍຕົນເອງ ແລະ ບໍລິການຕ່າງໆຂອງພາກລັດຄື:

- ລະບົບກວດສອບຂໍ້ມູນບັດປະກັນສັງຄົມ (LSSO)
- ລະບົບລວມສູນແບບຟອມ ແລະ ເອກະສານທາງການ
- ລະບົບຂໍ້ມູນວິສາຫະກິດແຫ່ງຊາດ (NED)
- ລະບົບຄັງປັນຍາລາວ



#### 4.1.1. ລະບົບກວດສອບຂໍ້ມູນບັດປະກັນສັງຄົມ (LSSO)

ເປັນລະບົບກວດສອບຂໍ້ມູນບັດປະກັນສັງຄົມຂອງຕົນໂດຍການປ້ອນລະຫັດບັດເຂົ້າແລ້ວ ລະບົບຈະສະແດງຂໍ້ມູນພື້ນຖານປະກັນສັງຄົມເຊັ່ນ: ຊື່ໂຮງໝໍ ແລະ ຂໍ້ມູນປະກັນສັງຄົມຂອງ

#### 4.1.2. ລະບົບລວມສູນແບບຟອມ ແລະ ເອກະສານທາງການ (G-Form)

ເປັນລະບົບເພື່ອໃຫ້ປະຊາຊົນ ສາມາດ Download ແລ້ວປະກອບເອກະສານ ຕ່າງໆ ໄດ້ຢ່າງວ່ອງໄວ ໂດຍບໍ່ຈຳເປັນເດີນທາງໄປປ່ອງບໍລິການ.

#### 4.1.3. ລະບົບຂໍ້ມູນວິສາຫະກິດແຫ່ງຊາດ (NED)

ເປັນລະບົບເພື່ອກວດສອບທະບຽນວິສາຫະກິດຂອງບັນດາບໍລິສັດວິສາຫະກິດ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ ວ່າໄດ້ຈົດທະບຽນວິສາຫະກິດແລ້ວ ຫຼື ບໍ່.

#### 4.1.4. ລະບົບຄັງປັນຍາລາວ

ເປັນລະບົບສື່ການສອນແບບອອນລາຍ, ຜູ້ໃຊ້ສາມາດເຂົ້າໄປຮຽນວິຊາຕ່າງໆຕັ້ງແຕ່ລະດັບ ປ1 ໄປຈົນຮອດ ມ7 ແລະ ມີຫຼັກສູດສຳລັບການເພີ່ມທັກສະໃນການສອນໃຫ້ກັບອາຈານໂດຍບໍ່ເສຍຄ່າ.

## 4.2 ການແຈ້ງເຕືອນ




ໜ້າຕ່າງການແຈ້ງເຕືອນ ແມ່ນກໍລະນີທີ່ມີບໍລິການຂ່າວສານ ແລະ ໂປຣໂມຊັ່ນໃໝ່ໆ ລະບົບຈະມີຂໍ້ຄວາມແຈ້ງເຕືອນຂຶ້ນມາໃຫ້ຜູ້ຊົມໃຊ້ໄດ້ຮັບຮູ້ບໍລິການໃໝ່ໆ ຂອງພາກລັດ

## 4.3 ການຕັ້ງຄ່າ

ໜ້າຕ່າງການຕັ້ງຄ່າ ຜູ້ໃຊ້ສາມາດຕັ້ງຄ່າຕ່າງໆໃນການນຳໃຊ້ແອັບ Gov-X ຕາມຄວາມຕ້ອງການເຊັ່ນ: ການນຳໃຊ້ລາຍນິ້ວມື ຫຼື ໃບໜ້າໃນການເຂົ້າໃຊ້ແອັບ, ຕັ້ງຄ່າເມນູພາສາ, ການແຈ້ງເຕືອນ, ກ່ຽວກັບ Gov-X ແລະ ອອກຈາກລະບົບ




# **ເອກະສານອ້າງອີງ**

- https://simreg.gov.la/pdf/lao_kyc_app.pdf (ປຶ້ມແນະນຳການຂຶ້ນທະບຽນເລກໝາຍໂທລະສັບ)